"ອົງພຣະຜູ້ເປັນເຈົ້າ ບໍ່ ໄດ້ ຊົງ ເສັຍ ຊ້າ ໃນ ເລື່ອງ ພຣະສັນຍາ ຂອງ ພຣະອົງ ເໝືອນ ດັ່ງ ບາງ ຄົນ ຄຶດວ່າ ຊ້າ ແຕ່ ພຣະອົງ ຊົງ ອົດ ກັ້ນ ພຣະໄທ ໄວ້ ດົນນານ ເພາະ ເຫັນ ແກ່ ທ່ານ ທັງຫຼາຍ ພຣະອົງ ບໍ່ ຊົງ ປະສົງ ທີ່ ຈະ ໃຫ້ ຜູ້ ໜຶ່ງ ຜູ້ ໃດ ຈິບຫາຍ ເສຍ ແຕ່ ຊົງ ປາດຖະໜາ ທີ່ ຈະ ໃຫ້ ຄົນ ທັງ ປວງ ມາ ເຖິງ ການ ຖິ້ມ ໃຈ ເກົ່າ ເອົາ ໃຈ ໃໝ່.

ວັນ ຂອງ ອົງພຣະຜູ້ເປັນເຈົ້າ ຈະ ມາ ເຖິງ ເໝືອນ ດັ່ງ ຂະໂມຍ ມາ ໃນ ເວລາ ກາງຄືນ; ໃນ ວັນ ນັ້ນ ທ້ອງຟ້າ ຈະ ລ່ວງ ເສຍ ໄປ ດ້ວຍ ສຽງ ດັງ ກ້ອງ ສະໜັ່ນ, ໂລກທາດ ຈະ ສະຫຼາຍ ໄປ ດ້ວຍ ໄຟ, ແລະ ແຜ່ນດິນ ໂລກ ກັບ ສາລະພັດ ທຸກ ສິ່ງ ຈະ ໄໝ້ ເສຍ ໝົດ.

ເມື່ອ ຮູ້ ແລ້ວ ວ່າ ສິ່ງ ທັງປວງ ຈະ ສະຫຼາຍ ໄປ ຢ່າງ ນີ້ ທ່ານ ທັງ ຫຼາຍ ຄວນ ຈະ ເປັນ ຄົນ ຢ່າງ ໃດ ໃນ ການ ດຳ ເນີນ ຊີວິດ ອັນ ບໍລິສຸດ ແລະ ການ ນັບຖື ພຣະ ເຈົ້າ?

ຈົ່ງ ຄອຍ ຖ້າ ແລະ ເຮັ່ງ ຮີບ ໃຫ້ ວັນ ຂອງ ພຣະເຈົ້າ ມາ ເຖິງ ຊຶ່ງ ໃນ ວັນ ນັ້ນ ທ້ອງ ຟ້າ ຈະ ຖືກ ໄຟ ເຜົາ ສະຫຼາຍ ໄປ ແລະ ໂລກ ທາດ ຈະ ຖືກ ໄຟຜານ ສະຫຼາຍ ໄປ.

ແຕ່ ວ່າ ຕາມ ພຣະສັນຍາ ຂອງ ພຣະອົງ ເຮົາ ທັງຫຼາຍ ຄອຍ ຖ້າ ຟ້າ ອາກາດ ໃໝ່ ແລະ ແຜ່ນ ດິນ ໂລກ ໃໝ່ ຊຶ່ງ ຄວາມ ຊອບທຳ ຈະ ຕັ້ງ ຢູ່ ທີ່ ນັ້ນ."

ໜັງສືຂອງພະຍາກອນທີ່ມາຈາກສະໄໝບູຮານ

# ໜັງສືບູຮານທີ່ມາຈາກອະນາຄົດ

ໂລກນີ້ຈະສະຫຼາຍ



ໂລກໃໝ່ຈະມາ

ຄໍາທໍານວາຍບູຮານທີ່ເຈາະເວລາມາຈາກອະນາຄົດ

## ໜັງສືບູຮານຈາກຍຸກອາວະກາດ